# ການປູກຫວາຍແຍ້

## ຄຸນປະໂຫຍດ

ການປູກຫວາຍແຍ້ເພື່ອ:

- ນຳໃຊ້ເສັ້ນເຂົ້າໃນການເຮັດຫັດຖະກຳຈັກສານ
- ເພື່ອນຳໃຊ້ຍອດ ຕັດບໍລິໂພກ, ຂາຍຍ່ອຍ ຫຼື ປຸງແຕ່ງໃຫ້ແຫ້ງເກັບຮັກສາ ແລະ ສົ່ງຂາຍອອກນອກ.


ເສັ້ນຫວາຍທີ່ນຳໃຊ້ເຂົ້າໃນຫັດຖະກຳຈັກສານ

## 1. ປັດໃຈທີ່ຄວນເລືອກຕໍ່ການປູກ

- ຈຳນວນເນື້ອທີ່ຂອງສວນທີ່ຈະປູກຄວນຈະມີຂະໜາດ 1ໄລ່ຂຶ້ນໄປ
- ລັກສະນະຂອງດິນອຸດົມສົມບູນດີ, ແຄມນ້ຳ, ນ້ຳຖ້ວມບາງຄັ້ງຄາວ
- ເນື້ອທີ່ແປນສຳລັບຫວາຍຕັດຍອດ ແລະ ກ້ອງຕົ້ນໄມ້ສຳລັບຫວາຍຕັດເສັ້ນເພື່ອຂາຍ.

## 2. ເຕັກນິກການປູກ

**ແນວພັນ ແລະ ລະດູການ:**

- ແນວພັນ ຕ້ອງມີອາຍຸ 9 — 12 ເດືອນ.
- ລະດູການທີ່ເໝາະສົມຕໍ່ການເພາະປູກແມ່ນຕົ້ນເດືອນ5 (ພຶດສະພາ)

**ໄລຍະຫ່າງການປູກ:**

- ໄລຍະຫ່າງຂອງກົກ ແລະ ແຖວ 2X3 ແມັດ

**ການຂຸດຂຸມ ແລະ ປູກ:**

- ຂະໜາດຂອງຂຸມ 30X30X30 ຊັງຕີແມັດ.
- ຫົດນ້ຳຫຼັງຈາກປູກແລ້ວ 1 — 2 ຄັ້ງ / ອາທິດ (ຖ້າຝົນບໍ່ຕົກ)

**ການບົວລະບັດຮັກສາ:**

ພາຍຫຼັງປູກແລ້ວ 3ເດືອນ ໃຫ້ເອົາຝຸ່ນຄອກໃນອັດຕາສ່ວນ 1 ກກ / ຕົ້ນ ຫຼື ຝຸ່ນເຄມີອີກ1ຄັ້ງ ຫຼື 200 ກກ ຕໍ່ຕົ້ນ (ສູດ 15— 15— 15 ຫຼື ສູດ 18— 64— 00) ພ້ອມທັງການເສຍຫຍ້າ

ຖ້າສວນປູກຫວາຍມີອາຍຸຫຼາຍ ປີ ຄວນໃຊ້ແກບຫຼືດິນຖົມເຫງົ້າຂອງຫວາຍເພື່ອຮັກສາຄວາມຊຸ່ມຊື່ນໜໍ່ຫວາຍຈະຂະຫຍາຍໂຕດີພ້ອມທັງອອກໜໍ່ໃໝ່ອີກດ້ວຍ, ຜ່ານໄລຍະ 7 ເດືອນຫຼັງຈາກປູກແລ້ວກໍ່ຈະເຫັນຫວາຍແຕ່ລະສຸມມີໜໍ່ຫວາຍເກີດຂຶ້ນ 3 — 5 ໜໍ່.

ຫວາຍແຍ້ ພາຍຫຼັງປູກຄົບ 7 ເດືອນ — 1 ປີ ກໍ່ສາມາດຕັດຍອດໄດ້ແລ້ວ, ໝາຍຄວາມວ່າໃນຈຳນວນ 12 ເດືອນເຮົາຈະສາມາດຕັດຍອດຫວາຍອອກ ໂດຍສະເລ່ຍ 1 ຍອດ/ ສຸມ / ເດືອນ, ປີໜຶ່ງສາມາດຕັດໄດ້ 12 ຍອດ, ຖ້າຫາກມີນ້ຳຫົດໃຫ້ຄວາມຊຸ່ມພຽງພໍ.

### 2.1 ວິທີການຕັດຍອດຂາຍ

ຫວາຍແຍ້ທີ່ປູກມີອາຍຸ 1 ປີ ສັງເກດເຫັນວ່າຈຳນວນຍອດສະເລ່ຍແຕ່ 5 — 8 ຍອດ, ມັນຈະຂຶ້ນກັບການເບິ່ງແຍງຮັກສາເປັນສຳຄັນ, ສິ່ງທີ່ຈະແນະນຳໃຫ້ຕັດຍອດມີຄື:

- ຄວນເລືອກຕັດລຳເດີມ: ຄວນຕັດຍອດຫວາຍທີ່ນຳມາປູກນັ້ນອອກກ່ອນຍ້ອນວ່າມັນຈະເປັນລຳ ທີ່ມີອາຍຸແກ່ກ່ອນໝູ່ ແລະ ມັນຈະບໍ່ຂະຫຍາຍໜໍ່ອີກຍອດຈະບໍ່ໃຫຍ່
- ຄັດເລືອກຕັດລຳທີ່ມີໃບຍ່ອຍກຳລັງຈູມ, ຍາວປະມານ 20 ຊມ ຫຼື ໃບຍອດຍັງບໍ່ທັນບານອອກ ຫຼື ຈະສັງເກດເຫັນປ້ອງຂອງຫວາຍຍາວ
- ສັງເກດເບິ່ງສີຂອງຍອດນັ້ນເປັນສີມົ່ນແກມຂຽວ
- ຕັດລຳທີ່ມີຄວາມຍາວ 1 — 1.5 ມ. ຕັດໃນລະດູຝົນຈະໄດ້ຍອດໃຫຍ່ ແລະ ໄດ້ປະລິມານຍອດອ່ອນຫຼາຍ.


ຜົນຜະລິດຍອດຫວາຍແຍ້ຢູ່ບ້ານທ່າໂພ, ເມືອງ ໂພນໂຮ ແຂວງຫຼວງພະບາງ

## 2.2 ສິ່ງທີ່ຄວນປະຕິບັດ

- ບໍ່ຄວນຕັດໜໍ່ທີ່ເກີດໃໝ່ຄວາມສູງ 50 ຊມ ລົງມາ ຫຼື ໜໍ່ນັ້ນກຳລັງເກີດໜໍ່ຂຶ້ນມາໃໝ່ 1 ໜໍ່.
- ບໍ່ຄວນຕັດຍອດຫວາຍທີ່ມີຂະໜາດຂອງປ້ອງສັ້ນ
- ບໍ່ຄວນຕັດຍອດທີ່ມີປາຍໃບສຸດແຜ່ອອກ(ຍອດຂ້າງໃນຈະສັ້ນ)
- ບໍ່ຄວນຕັດຍອດຈາກສຸມປູກສຸມໜຶ່ງຫຼາຍເກີນໄປ ເພາະຈະເຮັດໃຫ້ສຸມນັ້ນຂາດຄວາມສົມດຸນ)
- ບໍ່ຄວນໃຫ້ລູກຄ້າ ຫຼື ຄົນຂ້າງນອກເຂົ້າໄປຕັດຍອດ ຫວາຍເອງຕາມໃຈ(ຈະເຮັດໃຫ້ການຂະຫຍາຍໜໍ່ຫຼຸດລົງ)

**ໄດ້ຈາກການຕັດຍອດ ແລະ ໝາກ:**

ສວນປູກຫວາຍທີ່ຖືກຕ້ອງຕາມເຕັກນິກ ຈະສາມາດຕັດຍອດໄດ້ຍາວນານເຖິງ 20 — 40 ປີ ຈາກການລົງທຶນພຽງຄັ້ງດຽວ ແຕ່ສາມາດເກັບລາຍຮັບໄດ້ຍາວນານບໍ່ຕາຍ, ພາຍຫຼັງນ້ຳແຫ້ງລົງຍອດຫວາຍຍິ່ງມີການຂະຫຍາຍຕົວຕື່ມ.

## 3. ຜົນທີ່ໄດ້ຮັບຈາກການປູກຫວາຍ




## ການສົມທຽບລາຍຮັບ

- **ຈາກການຂາຍຍອດ:**

ຖ້າປູກຫວາຍແຍ້ 1 ປີຂຶ້ນໄປສາມາດຈະຕັດຫວາຍໄດ້ແລ້ວ ປີໜຶ່ງຈະຕັດຍອດຫວາຍຂາຍໄດ້ 12 ຍອດ / ສຸມ / ປີ X 700 ກີບ ລວມເປັນເງິນທັງໝົດຕໍ່ປີ ແລະ ຈະໄດ້ລາຍຮັບເພີ້ມຂຶ້ນໃນປີທີ 3 ຫຼາຍກວ່າ 2 ເທົ່າ.

- **ຈາກການຂາຍໝາກ:**

ໝາກຫວາຍແຍ້ຈະເລີ້ມເກີດ ແລະສາມາດເກັບໄດ້ໃນປີທີ 4 ສຸມໜຶ່ງຈະໄດ້ໝາກແຕ່ 10 — 20 ກກ, ລາຄາ 30,000 ກີບ / 1 ກກ (ປີ 2007).

- **ຈາກການຂາຍເສັ້ນ:**

ຫຼັງຈາກປູກໄດ້ 5 ປີ ເສັ້ນຫວາຍແຍ້ກໍ່ຈະສາມາດຂາຍໄດ້ສຸມ1 ປະມານ 10 — 13 ເສັ້ນ, ຄວາມຍາວສະເລ່ຍ 8 — 15 ມ. ນ້ຳໜັກຂອງເສັ້ນຫວາຍແຕ່> 0,5 —2,5 ກກ ຕໍ່ເສັ້ນ, 3,000 — 4,000 ກີບ / 1 ກິໂລ.

WWF
ໂທ: 021 216080
ຂໍ້ມູນເຕັກນິກຕິດຕໍ່
ທ່ານ ຄຳພອນ

LEAP
ໂທ: 021 740253

SUFORD
ໂທ: 021 740544

**ພາຍໃຕ້ການຮ່ວມມື :**

ສະຖາບັນຄົ້ນຄວ້າ ເຕັກນິກ—ວິທະຍາສາດ ກະສິກຳ ແລະ ປ່າໄມ້,

ກອງສົ່ງເສີມກະສິກຳ ແລະ ປ່າໄມ້

**ສະໜັບສະໜູນໂດຍ:**

ໂຄງການ ສົ່ງເສີມ ກະສິກຳ **(LEAP),**

ກອງທຶນອະນຸລັກທຳມະຊາດໂລກ **(WWF) & (SUFORD)**

ສູນຂໍ້ມູນຂ່າວສານການສົ່ງເສີມ

# ເຕັກນິກການປູກ ຫວາຍແຍ້

***Calamus tenuis* Roxburgh**



NAFRI

ກ.ສ.ກ.ປ NAFES